# ບົດບັນທຶກການຮ່ວມມື

**ລະຫວ່າງ**

**ອົງການປົກຄອງເມືອງສາມັກຄີໄຊ ແຂວງອັດຕະປື ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະ**

**ຄະນະກຳມະການປະຊາຊົນນະຄອນກອນຕູມ ແຂວງກອນຕູມ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ**

**ໄລຍະ 2023 - 2027**

- ອີງຕາມ ບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມື ລະຫວ່າງ ອົງການປົກຄອງແຂວງອັດຕະປື ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຄະນະກຳມະການປະຊາຊົນແຂວງກອນຕູມ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໄລຍະ 2022-2027 ທີ່ໄດ້ລົງນາມ ໃນຄັ້ງວັນທີ 26 ຕຸລາ 2022.

ເພື່ອເພີ່ມທະວີ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ, ການຮ່ວມມືຮອບດ້ານ ແລະ ຄວາມສາມັກຄີພິເສດ ລະຫວ່າງ ເມືອງສາມັກຄີໄຊ ແຂວງອັດຕະປື ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ນະຄອນກອນຕູມ ແຂວງກອນຕູມ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ( ຕໍ່ໄປນີ້ເອີ້ນວ່າ: ສອງຝ່າຍ ), ໄດ້ພົບປະເຮັດວຽກ, ແລກປ່ຽນກ່ຽວກັບສະພາບການພົວພັນຮ່ວມມື ລະຫວ່າງສອງຝ່າຍ.

ບົນພື້ນຖານຄວາມເໝາະສົມ ແລະ ຖືກຕ້ອງຕາມກົດໝາຍຂອງແຕ່ລະປະເທດ, ຜົນການເຮັດວຽກ ລະຫວ່າງ ເມືອງສາມັກຄີໄຊ, ແຂວງອັດຕະປື ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ນະຄອນກອນຕູມ, ແຂວງກອນຕູມ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໄດ້ລົງນາມບົດບັນທຶກຊ່ວຍຈຳການຮ່ວມມື ໄລຍະ 2023-2027 ມີເນື້ອໃນດັ່ງລຸ່ມນີ້ :

**ມາດຕາ 1 ການແລກປ່ຽນ, ເພີ່ມທະວີສາຍພົວພັນ**

1. ເມືອງສາມັກຄີໄຊ ແຂວງອັດຕະປື ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ນະຄອນກອນຕູມ ແຂວງກອນຕູມ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເຫັນດີເປັນເອກະພາບສ້າງບົດບັນທຶກຊ່ວຍຈຳສ້າງຕັ້ງສາຍພົວພັນມິດຕະພາບ, ຜັນຂະຫຍາຍການຮ່ວມມື, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຕາມຄວາມອາດສາມາດ, ຄວາມຕ້ອງການຂອງສອງຝ່າຍ; ສືບຕໍ່ເພີ່ມທະວີວຽກງານການພົວພັນທາງດ້ານການເມືອງ, ການຕ່າງປະເທດ ໃຫ້ກ້າວເຂົ້າສູ່ລວງເລິກ, ສະໜິດສະໜົມເຊື່ອໝັ້ນເຊິ່ງກັນ ແລະ ກັນ, ໃຫ້ບັນລຸປະສິດທິຜົນສູງຂຶ້ນກວ່າເກົ່າ.

2. ສອງຝ່າຍປະສານສົມທົບຢ່າງໃກ້ຊິດ, ຜັນຂະຫຍາຍບັນດາເນື້ອໃນຂໍ້ຕົກລົງ, ບົດບັນທຶກຊ່ວຍຈຳ ລະຫວ່າງ ອົງການປົກຄອງແຂວງອັດຕະປື ແລະ ຄະນະກຳມະການປະຊາຊົນ ແຂວງກອນຕູມ ທີ່ໄດ້ລົງນາມ ໃນຄັ້ງວັນທີ 26 ຕຸລາ 2022 ໃຫ້ໄດ້ຮັບຜົນດີ, ແກ້ໄຂບັນຫາຂໍ້ຫຍຸ້ງຍາກ, ຂໍ້ຄົງຄ້າງທີ່ເກີດຂຶ້ນໃນການພົວພັນລະຫວ່າງສອງແຂວງຢ່າງທັນການ ບົນຈິດໃຈສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ; ແຈ້ງການ ແລະ ປະສານສົມທົບກັນ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນການຜັນຂະຫຍາຍຈັດຕັ້ງປະຕິບັດໃຫ້ທັນເວລາ.

3. ສອງຝ່າຍສືບຕໍ່ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ພົນລະເມືອງຂອງແຕ່ລະຝ່າຍ ທີ່ກຳລັງດຳລົງຊີວິດ, ສຶກສາຮ່ຳຮຽນ, ເຮັດວຽກໃນທ້ອງຖິ່ນຂອງແຕ່ລະຝ່າຍ ໂດຍໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍຂອງແຕ່ລະປະເທດ.

4. ສອງຝ່າຍສືບຕໍ່ເຊື່ອມຊຶມ, ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ກ່ຽວກັບປະຫວັດສາດ, ມູນເຊື້ອສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ແຂວງອັດຕະປື-ແຂວງກອນຕູມ ແລະ ເມືອງສາມັກຄີໄຊ-ນະຄອນກອນຕູມ ໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຮູ້ ໂດຍສະເພາະແມ່ນຄົນລຸ້ນໜຸ່ມຂອງສອງເມືອງ, ນະຄອນ.

5. ສອງຝ່າຍເອກະພາບເພີ່ມທະວີຄວາມເຂົ້າອົກເຂົ້າໃຈເຊິ່ງກັນ ແລະ ກັນ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ການນຳ, ພະນັກງານ-ລັດຖະກອນ ແລະ ປະຊາຊົນ ໄດ້ພົບປະແລກປ່ຽນວັດທະນະທຳ, ໄປມາຢ້ຽມຢາມຍາດຕິພີ່ນ້ອງ ແລະ ອວຍພອນກັນໃນວັນບຸນສຳຄັນຂອງສອງປະເທດ ລາວ-ຫວຽດນາມ, ສອງແຂວງອັດຕະປື-ກອນຕູມ ເວົ້າລວມ ແລະ ເມືອງສາມັກຄີໄຊ-ນະຄອນກອນຕູມ ເວົ້າສະເພາະ.

**ມາດຕາ 2 ການຮ່ວມມືທາງດ້ານເສດຖະກິດ**

1. ສອງຝ່າຍປະສານສົມທົບກັນໂຄສະນາ, ເຜີຍແຜ່ ຢ່າງກ້ວາງຂວາງ ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນຕໍ່ກັບສົນທິສັນຍາສາກົນ, ຂໍ້ຕົກລົງສາກົນ ກ່ຽວກັບ ການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດ ແລະ ບັນດາກົນໄກບຸລິມະສິດໃນການຄ້າ ລະຫວ່າງ ສອງປະເທດ, ສອງແຂວງ; ເພີ່ມທະວີການເປີດກ້ວາງ ແລະ ຊຸກຍູ້ສົ່ງເສີມການລົງທຶນການຄ້າຂອງສອງຝ່າຍ.

2. ສອງຝ່າຍຊ່ວຍແນະນຳ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການຊ່ວຍເຫຼືອນັກລົງທຶນຂອງແຕ່ລະຝ່າຍ ໂດຍສະເພາະສ້າງຈຸດແນະນຳ, ຈຸດຈຳໜ່າຍ ແລະ ຂາຍສິນຄ້າຫວຽດນາມ ຢູ່ເມືອງສາມັກຄີໄຊ, ແຂວງອັດຕະປື ແລະ ສິນຄ້າລາວ ຢູ່ນະຄອນກອນຕູມ, ແຂວງກອນຕູມ.

3. ສອງຝ່າຍຮ່ວມມືແລກປ່ຽນບົດຮຽນ, ທັດສະນະສຶກສາ ລະຫວ່າງ ການນຳຂອງເມືອງສາມັກຄີໄຊ ກັບການນຳຂອງນະຄອນກອນຕູມ ດ້ານການພັດທະນາກະສິກຳດ້ວຍເທັກໂນໂລຊີທັນສະໄໝ ແລະ ສ້າງຈຸດເພີ່ມມູນຄ່າໃຫ້ແກ່ຜະລິດຕະພັນກະສິກຳຕົ້ນຕໍຂອງທ້ອງຖິ່ນ.

4. ຮ່ວມມືຊ່ວຍເຫຼືອໃນການໂຄສະນາ, ຊົມໃຊ້ບັນດາຜະລິດຕະພັນທີ່ເປັນເອກະລັກຂອງແຕ່ລະທ້ອງຖິ່ນໂດຍຜ່ານງານຕະຫຼາດນັດ, ງານວາງສະແດງສິນຄ້າ ທີ່ແຕ່ລະທ້ອງຖິ່ນຈັດຂຶ້ນ.

5. ສອງຝ່າຍເພີ່ມທະວີການແລກປ່ຽນ, ຮ່ວມມືໃນວຽກງານການຄຸ້ມຄອງ ແລະ ພັດທະນາຕົວເມືອງໃຫ້ເປັນຕົວເມືອງສີຂຽວ - ສະອາດ, ຈົບງາມ; ຊຸກຍູ້ສົ່ງເສີມວຽກງານການປົກປັກຮັກສາສິ່ງແວດລ້ອມໃນຕົວເມືອງ ແລະ ບັນດາການບໍລິການສາທາລະນະປະໂຫຍດ.

**ມາດຕາ 3 ຮ່ວມມືທາງດ້ານວຽກງານຮັບປະກັນຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍ.**

1. ສອງຝ່າຍຮ່ວມມືກັນຢ່າງໜັກແໜ້ນ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຕາມລະບຽບກົດໝາຍຂອງສອງປະເທດ.

2. ສອງຝ່າຍເອກະພາບກັນ ກ່ຽວກັບ ການແລກປ່ຽນສະພາບ, ຂໍ້ມູນຂ່າວສານຕ່າງໆ ທີ່ກ່ຽວພັນເຖິງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

3. ເພີ່ມທະວີການໂຄສະນາ, ສຶກສາອົບຮົມປະຊາຊົນໃຫ້ເຄົາລົບປະຕິບັດລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງແຕ່ລະປະເທດ, ຕັ້ງໜ້າເຂົ້າຮ່ວມປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ ປະກອບສ່ວນເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ, ການຮ່ວມມື ແລະ ພັດທະນາ.

4. ແຕ່ລະຝ່າຍເອກະພາບເພີ່ມທະວີການຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງບັນດາຫົວໜ່ວຍທຸລະກິດ, ພົນລະເມືອງຂອງສອງຝ່າຍ ທີ່ໄປຄ້າ-ຂາຍ ແລະ ທຳມາຫາກິນຢູ່ປະເທດຂອງຕົນ ດ້ວຍມາດຕະການຮັບປະກັນສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນແຕ່ລະຝ່າຍ, ເໝາະສົມ ແລະ ຖືກຕ້ອງສອດຄ່ອງກັບຂໍ້ກຳນົດກົດລະບຽບຂອງແຕ່ລະປະເທດ.

5. ແຕ່ລະຝ່າຍເປັນເອກະພາບ ເພີ່ມທະວີໃນການຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງບັນດາວິສາຫະກິດ ທີ່ພົນລະເມືອງຂອງແຕ່ລະຝ່າຍຄ້າ-ຂາຍ, ທຳມາຫາກິນ ຢູ່ທ້ອງຖິ່ນຂອງຕົນ, ດ້ວຍວິທີທີ່ເໝາະສົມ ແລະ ພ້ອມກັນຮັບປະກັນສິດຜົນປະໂຫຍດອັນຊອບທຳຂອງທັງສອງຝ່າຍ, ປະຕິບັດກົດໝາຍ ວ່າດ້ວຍ ການຄຸ້ມຄອງຄົນຕ່າງປະເທດ.

ມາດຕາ 4 ການແກ້ໄຂຂໍ້ຂັດແຍ່ງ

1. ທຸກໆຄວາມແຕກຕ່າງ ຫຼື ຂໍ້ຂັດແຍ່ງທີ່ກ່ຽວຂ້ອງເຖິງການອະທິບາຍ ຫຼື ປະຕິບັດບົດບັນທຶກຊ່ວຍຈຳ ແມ່ນຈະໄດ້ແກ້ໄຂບົນພື້ນຖານການປຶກສາຫາລື ແລະ ຟັງຄວາມຄິດເຫັນຂອງສອງຝ່າຍ.

2. ທຸກໆຄວາມຕ້ອງການໃນການປຶກສາຫາລື ແລະ ຟັງຄວາມຄິດເຫັນ ຕ້ອງໄດ້ສ້າງເປັນນິຕິກຳ ແລະ ສົ່ງຜ່ານພາກສ່ວນຮັບຜິດຊອບວຽກງານການຕ່າງປະເທດຂອງສອງຝ່າຍ.

ມາດຕາ 5 ການຈັດຕັ້ງປະຕິບັດ

1. ສອງຝ່າຍເອກະພາບແຕ່ງຕັ້ງຄະນະປະສານງານຂອງເມືອງສາມັກຄີໄຊ ແລະ ນະຄອນກອນຕູມ, ເຊິ່ງແມ່ນຫົວໜ້າຫ້ອງວ່າການສອງຝ່າຍເປັນຫົວໜ້າ; ແຕ່ລະປີ ຄະນະປະສານງານ ເປັນເສນາທິການ ເພື່ອຈັດກອງປະຊຸມຕີລາຄາສະພາບການຈັດຕັ້ງປະຕິບັນດາເນື້ອໃນທີ່ໄດ້ລົງນາມ.

2. ບົດບັນທຶກສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ຮອດເດືອນ ທັນວາ ປີ 2027, ສອງຝ່າຍເອກະພາບກັນ ປີ 2023 ຈະຈັດກອງປະຊຸມເຊັນບົດບັນທຶກຮ່ວມມື ໄລຍະ 2023-2027 ທີ່ເມືອງສາມັກຄີໄຊ, ແຂວງອັດຕະປື, ປີ 2025 ຈະຈັດກອງປະຊຸມ ສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດ ກາງໄລຍະ ທີ່ເມືອງສາມັກຄີໄຊ ແຂວງອັດຕະປື ແລະ ປີ 2027 ຈະຈັດກອງປະຊຸມສະຫຼຸບທ້າຍໄລຍະ ແລະ ລົງນາມບົດບັນທຶກຮ່ວມມືໄລຍະຕໍ່ໄປທີ່ນະຄອນກອນຕູມ, ແຂວງກອນຕູມ. ໃນໄລຍະການຈັດຕັ້ງປະຕິບັດບົດບັນທຶກ ຖ້າມີການປ່ຽນແປງເພີ່ມເຕີມ, ສອງຝ່າຍຈະພິຈາລະນາຮ່ວມກັນ ເພື່ອເອົາເຂົ້າໃນທິດທາງແຜນການຮ່ວມມືໃນໄລຍະຕໍ່ໄປ.

3. ບົດບັນທຶກສະບັບນີ້ໄດ້ສ້າງຂຶ້ນ ທີ່ເມືອງສາມັກຄີໄຊ ແຂວງອັດຕະປື ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ວັນທີ 28 ທັນວາ 2023; ບົດບັນທຶກໄດ້ສ້າງເປັນສອງ (02) ສະບັບ ດ້ວຍສອງພາສາຄື: ພາສາລາວ ແລະ ພາສາຫວຽດນາມ, ແຕ່ລະສະບັບມີຄຸນຄ່າເທົ່າທຽມກັນ, ແຕ່ລະຝ່າຍຮັກສາໄວ້ ຝ່າຍລະໜຶ່ງ (01) ສະບັບ.

| | |
|---|---|
| ຕາງໜ້າ ອົງການປົກຄອງເມືອງສາມັກຄີໄຊ<br>ແຂວງອັດຕະປື ແຫ່ງ ສປປ ລາວ<br>ເຈົ້າເມືອງ | ຕາງໜ້າ ຄະນະກຳມະການປະຊາຊົນນະຄອນກອນຕູມ<br>ແຂວງກອນຕູມ ແຫ່ງ ສສ ຫວຽດນາມ<br>ປະທານຄະນະກຳມະການປະຊາຊົນ |
| ເພັດມີໄຊ ຄຳພັກດີ | ຫາວຽນ ແທັງ ເມີນ |